# ວັກຊິນ ນິວຄາເຊີນອາຍຸແກ່

## ນິຍາມ:

ວັກຊິນຊະນິດນີ້ ປຸງແຕ່ງຈາກເຊື້ອໄວຣັສ ນິວຄາເຊີນ ມຸກເຕຊີວ ຫລື “M “ ປູກໃສ່ໄຂ່ລູກ ອາຍຸ 10 ມື້. ຫລັງຈາກນັ້ນ ເກັບເອົານ້ຳຫລໍ່ລ້ຽງມາປະສົມນົມຝຸ່ນແຍກໄຂມັນບັນຈຸແກ້ວ ແລ້ວເອົາເຂົ້າຈັກດູດແຫ້ງດ້ວຍຄວາມເຢັນ ໃນລະບົບສູນອາກາດ ແມ່ນວັກຊິນເຊື້ອເປັນ.




## ລັກສະນະອາການ

ພະຍາດນີ້ເກີດຂຶ້ນກະທັນຫັນ ໂດຍບໍ່ມີປະກົດການຂອງພະຍາດ. ສຳລັບໄກ່ທີ່ໃກ້ຈະຕາຍ: ເຫງົາ, ຂົນຫຍຶງ, ອ້າປາກຫາຍໃຈຍາກ ເພາະນ້ຳມູກຕັນຫລອດລົມ. ຫອນ ແລະ ຕ້າງມີສີຊ້ຳ ຕໍ່ມາກໍ່ມ້ານ, ສີຂຽວ ສຸດທ້າຍກໍ່ເປັນລ່ອຍແລ້ວຕາຍເຖິງ 5 — 10 %, ບາງໂຕບໍ່ຕາຍກໍ່ລ່ອຍເລີຍ ຫລື ຄໍບິດ. ວິທີສັງເກດບົ່ງມະຕິພະຍາດນີ້: ມີແຕ່ໄກ່ຕາຍ, ສ່ວນເປັດ,ໄກ່ງວງ, ຫ່ານ ນັ້ນປອດໄພ ຫລື ເປັນກໍ່ເບົາບາງທີ່ສຸດ.

## ຂໍ້ແນະນຳ:

ໃຊ້ປ້ອງກັນພະຍາດ ນິວຄາເຊີນ, ໃຫ້ໄກ່ທົ່ວໄປ ອາຍຸ 6 ອາທິດຂຶ້ນໄປ.

- ໄກ່ທີ່ສັກຢານີ້ຈຳນວນ 1 — 3 % ອາດຈະມີການເປັນລ່ອຍ.
- ຖ້າໃຊ້ກັບໄກ່ພັນໄຂ່ທີ່ກຳລັງໄຂ່, ໄຂ່ນັ້ນຈະຫລຸດປະລິມານລົງ ພາຍຫລັງ 2 ອາທິດ ໄກ່ກໍ່ຈະໄຂ່ຄືນໃນລະດັບປົກກະຕິ.
- ຫ້າມສັກໄກ່ທີ່ມີສຸຂະພາບອ່ອນເພຍ.
- ບໍ່ຄວນໃຊ້ເຫຼົ້າ ຫລື ຢາຂ້າເຊື້ອອື່ນໆ ເຊັດຕາມບໍລິເວນສັກຢາ, ກ່ອນ ຫລື ຫລັງສັກ.

## ວິທີໃຊ້:

1. ສັ່ນໃຫ້ລະອຽດກ່ອນໃຊ້




2. ແກ້ວ 200 ເຂັມ ປະສົມນ້ຳກັ່ນ 100 ມລ. ແກ້ວ 100 ເຂັມ ປະສົມນ້ຳກັ່ນ 50 ມລ.







3. ສັກກ້າມຊີ້ນ ກົກປີກ ຫລື ກ້າມຂາ ໂຕລະ 0,5 ມລ. ຫລັງຈາກປະສົມຢາແລ້ວ ຄວນໃຊ້ໃຫ້ໝົດພາຍໃນ 2 ຊົ່ວໂມງ.



ສັກກ້າມຊີ້ນກົກປີກ ຫລື ກ້າມຂາ

## ໄລຍະຄຸ້ມກັນ:

ສັດຈະມີການຄຸ້ມກັນ ຫລັງຈາກສັກໄດ້ 2 ອາທິດ ແລະ ຈະຄຸ້ມກັນພະຍາດນິວຄາເຊີນຢ່າງໜ້ອຍ 1 ປີ.

## ການເກັບຮັກສາ:

ຮັກສາໃນອຸນນະພູມ 4 ອົງສາ ກຸ້ມໄດ້ 3 ເດືອນ, ໃນອຸນນະພູມ ( — 30 ອົງສາ ກຸ້ມໄດ້ 1 ປີ ). ເວລາຂົນຍ້າຍວັກຊິນ ຄວນຮັກສາໃຫ້ຢູ່ໃນຄວາມເຢັນ ແລະບໍ່ໃຫ້ຖືກແສງແດດ.

**ແກ້ວບັນຈຸ:** ແກ້ວໜຶ່ງບັນຈຸ 200 ເຂັມ ແລະ 100 ເຂັມ.

## ຕາຕະລາງ : ການນຳໃຊ້ຢາວັກຊີນ ນິວຄາເຊີນ ອາຍຸແກ່

| ຊະນິດຢາວັກຊີນ | ອາຍຸສັດຕ້ອງໃຊ້ | ວິທີໃຊ້ | ໄລຍະຄຸ້ມກັນ |
|---|---|---|---|
| • ຢາວັກຊີນ ນິວຄາເຊີນ ອາຍຸແກ່ | ໄກ່ 6 ອາທິດ ຂຶ້ນໄປ | ແກ້ວ100ເຂັມປະ ສົມນ້ຳກັ່ນ 50 ມລ.<br>* ສັກກ້າມຊີ້ນ ກົກປີກ ຫືລ ກ້າມຂາ ໂຕ ລະ 0,5 ມລ. | 1 ປີ |


**Laos Extension for Agriculture Project**
**P.O. Box 9159**
**Vientiane, Lao P.D.R.**



ກອງສົ່ງເສີມກະສິກຳ ແລະ ປ່າໄມ້ ແຫ່ງຊາດ

ພະແນກສົ່ງເສີມ ແລະ ຄຸ້ມຄອງໂຄງການ


# ການນຳໃຊ້ຢາວັກຊີນ ນິວຄາເຊີນອາຍຸແກ່



ຄັດຈາກ: ປື້ມຄູ່ມືການນຳໃຊ້ວັກຊີນສຳລັບສັດ (1997)


ຮຽບຮຽງໂດຍ :

ໜ່ວຍງານຝຶກອົບຮົມສົ່ງເສີມ ຂັ້ນສູນກາງ (CETDU)

ສະໜັບສະໜູນໂດຍ :

ໂຄງການ ສົ່ງເສີມ ກະສິກຳ (LEAP)